ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

ເລກທີ 2592/ກປ

ນະຄອນຫຼວງວຽງຈັນ, ວັນທີ 15 AUG 2014

# ຄຳສັ່ງ

## ຂອງລັດຖະມົນຕີ

## ກ່ຽວກັບ ການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ກວດກາຝຸ່ນ, ແນວພັນພືດ ແລະຢາຂ້າຫຍ້າ ລວມທັງຢາປາບສັດຕູພືດອື່ນໆ ທີ່ນຳໃຊ້ຢູ່ ສປປ ລາວ

ເຖິງ: - ທ່ານຫົວໜ້າຫ້ອງການ, ບັນດາກົມ ແລະສະຖາບັນອ້ອມຂ້າງກະຊວງກະສິກຳ ແລະປ່າໄມ້;
- ທ່ານ ຫົວໜ້າພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

- ອີງຕາມກົດໝາຍວ່າດ້ວຍກະສິກຳ ສະບັບເລກທີ 01/98 ສພຊ, ລົງວັນທີ 10 ຕຸລາ 1998;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມໜັງສືສະເໜີຂອງກົມປູກຝັງ ສະບັບເລກທີ 1023/ກປຝ, ລົງວັນທີ 30 ກໍລະກົດ 2014.

ໃນໄລຍະຜ່ານມາ, ບັນດາຂະແໜງການອ້ອມຂ້າງສູນກາງ ແລະອຳນາດການປົກຄອງທ້ອງຖິ່ນທຸກຂັ້ນ ໄດ້ໃຫ້ການຮ່ວມມືເປັນຢ່າງດີ ຕໍ່ກັບການຄຸ້ມຄອງ, ຕິດຕາມ ແລະກວດກາການນຳເຂົ້າປັດໃຈຮັບໃຊ້ການຜະລິດກະສິກຳ ເປັນຕົ້ນແມ່ນຝຸ່ນ, ແນວພັນພືດ ແລະຢາປາບສັດຕູພືດ ອັນໄດ້ເຮັດໃຫ້ຊາວກະສິກອນ ແລະຜູ້ປະກອບການໄດ້ຊົມໃຊ້ປັດໃຈຮັບໃຊ້ການຜະລິດທີ່ມີຄຸນນະພາບ, ຖືກຕ້ອງຕາມມາດຕະຖານເຕັກນິກ ແລະລະບຽບກົດໝາຍ ເຊິ່ງໄດ້ປະກອບສ່ວນເຂົ້າໃນການຍົກສະມັດຕະພາບການຜະລິດໃຫ້ສູງຂຶ້ນ, ສ້າງລາຍຮັບໃຫ້ຊາວກະສິກອນ ແລະຜູ້ປະກອບການ ໄດ້ເປັນຢ່າງດີ; ແຕ່ຄຽງຄູ່ກັນນັ້ນ ກໍຍັງມີຜູ້ປະກອບການຈຳນວນໜຶ່ງ ນຳເຂົ້າປັດໃຈຮັບໃຊ້ການຜະລິດ ເຊັ່ນ: ຝຸ່ນ, ແນວພັນພືດ ແລະຢາປາບສັດຕູພືດ ໂດຍສະເພາະຢາຂ້າຫຍ້າທີ່ຫ້າມນຳໃຊ້ ແຕ່ຊໍ້າພັດລັກລອບນຳເຂົ້າ, ຈຳໜ່າຍ ແລະນຳໃຊ້ ຢ່າງຊະຊາຍ ໂດຍບໍ່ຄຳນຶງເຖິງຜົນກະທົບຕໍ່ຄົນ, ສັດ, ພືດ ແລະສິ່ງແວດລ້ອມ ອັນໄດ້ສ້າງພາບພົດບໍ່ດີໃຫ້ແກ່ການຊີ້ນຳ - ນຳພາທາງດ້ານເຕັກນິກວິຊາການ ຂອງຂະແໜງການກະສິກຳ ແລະປ່າໄມ້, ເຮັດໃຫ້ຊາວກະສິກອນ ໄດ້ຮັບຜົນກະທົບທາງລົບ, ອັບປະໂຫຍດ, ຫຼຸບທຶນ, ເກີດມີໜີ້ສິນ ແລະສ້າງຄວາມຫຍຸ້ງຍາກໃຫ້ແກ່ສັງຄົມ ແລະປະເທດຊາດ.

ເພື່ອແກ້ໄຂບັນຫາດັ່ງກ່າວ, ແນໃສ່ບັນລຸຄາດໝາຍສູ້ຊົນຜະລິດກະສິກຳ ໂດຍສະເພາະການຜະລິດເຂົ້າລວມ